OMB ອະນຸຍາດເລກທີ່ No. 2577-0169
(ມື້ໝົດກຳນົດ. 09/30/2010)

# ບັດ Voucher

ໂຄງການບັດອະນຸຍາດໃຫ້ເລືອກທີ່ພັກອາສັຍ

**ກະຊວງເຄຫະສຖານແລະ**
**ການພັທນາຕົວເມືອງຂອງສຫະຣັຖ**
ກົມເຄຫະສຖານຫລວງແລະສຳລັບຊົນເຜົ່າອາເມຣິກັນອິນດຽນ

ປະເມີນວ່າເວລາໃຊ້ເພື່ອເກັບກຳຂໍ້ມູນເພື່ອຕອບຄຳຖາມນີ້ງ ຄິດສເລັ່ຍຈະຕົກເປັນປະມານ 0.05 ຊົ່ວໂມງ ຊຶ່ງຮວມທັງເວລາກວດເບິ່ງຄຳແນະນຳ ເວລາຄົ້ນເບິ່ງແຫລ່ງຂໍ້ມູນທີ່ມີຢູ່ແລ້ວ ເວລາຮວບຮວມແລະຮັກສາຂໍ້ມູນທີ່ຕ້ອງການ ແລະເວລາກວດເບິ່ງການເກັບກຳຂໍ້ມູນ.

ການອະນຸຍາດໃຫ້ເກັບກຳຂໍ້ມູນນີ້ ແມ່ນບົ່ງໄວ້ໃນວັກ 8 ຂອງກົດໝາຍວ່າດ້ວຍການເຄຫະສຖານຂອງສຫະຣັຖ ສບັບປີ 1937 (42 U.S.C. 1437f). ຂໍ້ມູນເຫລົ່ານີ້ໃຊ້ເພື່ອອະນຸຍາດໃຫ້ຄອບຄົວສາມາດໄປຊອກບ່ອນຢູ່ອາສັຍໄດ້ຕາມຖານະ ພ້ອມກັບບົ່ງເຖິງຂນາດເຮືອນທີ່ມີສິດຢູ່ໄດ້. ອີກປະການນຶ່ງ ຂໍ້ມູນເຫລົ່ານີ້ຍັງບົ່ງເຖິງພັນທະຂອງຄອບຄົວ ພາຍໃຕ້ໂຄງການບັດອະນຸໃຫ້ເລືອກທີ່ພັກອາສັຍນຳອີກ.

| ກະຣຸນາອ່ານຂໍ້ຄວາມ **ທັງໝົດ** ກ່ອນ ຈຶ່ງຂຽນຄຳຕອບ.<br>ຕື່ມຂໍ້ຄວາມໃສ່ໃນຊ່ອງທາງຂວາມື ເພື່ອຕອບຄຳຖາມຂ້າງລຸ່ມນີ້ໃຫ້ຄົບ.ໃຊ້ຈັກຕີພິມ ຫລືຂຽນຕົວພິມຢ່າງແຈ່ມແຈ້ງ | ນຳເບີບັດ voucher |
|---|---|
| 1. ບອກ **ຂນາດເຮືອນຢູ່** ຕາມຈຳນວນຫ້ອງນອນ. (ຈຳນວນຫ້ອງນອນທີ່ຄອບຄົວມີສິດຢູ່ໄດ້, ຊຶ່ງໃຊ້ເພື່ອຕັດສິນວ່າຄວນຈະຈ່າຍເງິນໃຫ້ເຈົ້າຂອງເຮືອນຫລາຍປານໃດ ສຳລັບຊ່ວຍເຫລືອຄອບຄົວ) | 1. ຂນາດເຮືອນຢູ່ |
| 2. **ມື້ອອກບັດ voucher** (ມມ/ດດ/ປປປປ)<br>ມື້ແທ້ໆທີ່ອອກບັດໃຫ້ຄອບຄົວ | 2 ມື້ອອກບັດ (ມມ/ດດ/ປປປປ) |
| **3. ມື້ບັດ voucher ໝົດກຳນົດ** (ມມ/ດດ/ປປປປ)<br>ວັນທີຫລັງຈາກທີ່ຄອບຄົວໄດ້ຮັບອະນຸມັດບັດ voucher. (ເບິ່ງວັກ 6 ຂອງ ຟອມນີ້). | 3. ມື້ໝົດອາຍຸ (ມມ/ດດ/ປປປປ) |
| 4. **ມື້ການຕໍ່ອາຍຸ ໝົດກຳນົດ** (ມມ/ດດ/ປປປປ)<br>ເບິ່ງວັກ 6. ຂອງຟອມນີ້ | 4. ມື້ຕໍ່ອາຍຸໝົດກຳນົດ (ມມ/ດດ/ປປປປ) |

| 5. ຊື່ຜູ້ຕ່າງໜ້າຄອບຄົວ | 6. ລາຍເຊັນຜູ້ຕາງໜ້າຄອບຄົວ | ມື້ເຊັນຊື່ (ມມ/ດດ/ປປປປ) |
|---|---|---|
| 7. ຊື່ກົມເຄຫະສຖານຫລວງ (PHA) | | |
| 8. ຊື່ແລະຕຳແໜ່ງຂອງເຈົ້າໜ້າທີ່ PHA | 9. ລາຍເຊັນຂອງເຈົ້າໜ້າທີ່ PHA | ມື້ເຊັນຊື່ (ມມ/ດດ/ປປປປ) |

## 1. ໂຄງການບັດ voucher ອະນຸຍາດໃຫ້ເລືອກທີ່ພັກອາສັຍ

ກ. PHA ໄດ້ລົງຄວາມເຫັນແລ້ວວ່າຄອບຄົວທີ່ມີຊື່ຂຽນຢູ່ຂ້າງເທິງນີ້ (ຂໍ້ 5) ມີເງື່ອນໄຂພຽງພໍ ທີ່ຈະມີສິດເຂົ້າຮ່ວມໃນໂຄງການບັດອະນຸຍາດໃຫ້ເລືອກທີ່ພັກອາສັຍ. ໂຄງການນີ້ບົ່ງໄວ້ວ່າ ໃຫ້ຄອບຄົວເລືອກບ່ອນຢູ່ທີ່ສົມມາສົມຄວນ ປອດພັຍ ແລະຖືກອະນາມັຍເພື່ອເປັນທີ່ພັກອາສັຍ. ຖ້າເຈົ້າຂອງເຮືອນທາກຕົກລົງທີ່ຈະໃຫ້ຄອບຄົວເຊົ່າ ຕາມໂຄງການນີ້ ແລະຖ້າ PHA ເຫັນດີເຫັນຊອບນຳເຮືອນຫ້ອງດັ່ງກ່າວ PHA ກໍຈະເຊັນສັນຍາໃຫ້ເງິນຊ່ວຍເຫລືອຄ່າເຊົ່າເຮືອນ (ສັນຍາHAP) ກັບເຈົ້າຂອງເຮືອນ ເພື່ອຮັບຮອງວ່າຈະຈ່າຍເງິນໃຫ້ເຈົ້າຂອງເຮືອນ ເປັນການຊ່ວຍແບ່ງເບົາຄ່າເຊົ່າຂອງຄອບຄົວ.

ຂ. PHA ເປັນຜູ້ກຳນົດຈຳນວນເງິນຊ່ວຍຄ່າເຊົ່າເຮືອນ ທີ່ຈະຈ່າຍໃຫ້ເຈົ້າຂອງເຮືອນແຕ່ລະເດືອນໃນນາມຂອງຄອບຄົວ. ໂດຍທົ່ວໄປ ຈຳນວນເງິນຊ່ວຍເຫລືອຄ່າເຊົ່າເຮືອນທີ່ PHA ອະນຸມັດໃຫ້ແຕ່ລະເດືອນ ແມ່ນເທົ່າກັບຈຳນວນທີ່ເຫລືອຈາກຈຳນວນຄ່າເຊົ່າທັງໝົດ ຊຶ່ງໂຄງການໃຊ້ເປັນມາຕຖານ ຫັກອອກ 30% ຂອງຣາຍໄດ້ຂອງຄອບຄົວ ຫລັງຈາກເສັຍພາສີອາກອນທັງໝົດແລ້ວ. ເພື່ອປະເມີນຈຳນວນເງິນຊ່ວຍເຫລືອສູງສຸດໃຫ້ແກ່ຄອບຄົວ ໃນຂັ້ນເລີ້ມຕົ້ນ PHA ຈະໃຊ້ຈຳນວນທີ່ສູງທີ່ສຸດຕາມມາຕຖານທີ່ໃຊ້ໃນມື້ທີ່ PHA ຕົກລົງເຫັນດີນຳການເຊົ່າ. ຄອບຄົວມີສິດເລືອກເຊົ່າເຮືອນ ທີ່ຄ່າເຊົ່າສູງກວ່າມາຕຖານທີ່ໂຄງການອະນຸມັດໃຫ້ ແຕ່ການຕັດສິນໃຈດັ່ງກ່າວຂອງຄອບຄົວຈະບໍ່ເຮັດໃຫ້ PHA ເພີ່ມເງິນຊ່ວຍເຫລືອຂຶ້ນໃຫ້ແຕ່ປະການໃດ. PHA ຈະກຳນົດຈຳນວນເງິນຊ່ວຍເຫລືອໂຕຈິງ ໂດຍໃຊ້ຈຳນວນຄ່າເຊົ່າທັງໝົດສຳລັບເຮືອນທີ່ຄອບຄົວເລືອກເອົານັ້ນເປັນມາຕຖານ.

## 2. ບັດ voucher

ກ. ເວລາອອກບັດ voucher ໄປແລ້ວ PHA ຫວັງວ່າຈະມີງົບປະມານເພື່ອຮອງຮັບສັນຍາເຊົ່າ (HAP) ກັບເຈົ້າຂອງເຮືອນໄດ້ ຫລັງຈາກທີ່ຄອບຄົວຊອກໄດ້ເຮືອນທີ່ຖືກຕ້ອງຕາມເງື່ອນໄຂຂອງໂຄງການແລ້ວ. ແຕ່ PHA ບໍ່ມີພັນທະໃດໆຕໍ່ຄອບຄົວ ເຈົ້າຂອງເຮືອນ ຫລືບຸກຄົນໃດໆກໍຕາມ ທີ່ຈະເຫັນພ້ອມໃຫ້ເຊົ່າເຮືອນ. ໂດຍການອອກບັດ voucher ນີ້ PHA ບໍ່ມີຄວາມຮັບຜິດຊອບໃນທາງນິຕິກັມຕໍ່ຝ່າຍໃດທັງສິ້ນ.

ຂ. ການໄດ້ຮັບບັດ voucher ນີ້ ບໍ່ໄດ້ໝາຍຄວາມວ່າຄອບຄົວມີສິດເຂົ້າຮ່ວມໃນໂຄງການອອກບັດ voucher ໃຫ້ເລືອກເຮືອນ. ຈະຖືວ່າຄອບຄົວໄດ້ເຂົ້າຮ່ວມໂຄງການອອກບັດ voucher ໃຫ້ເລືອກເຮືອນຂອງ PHA ກໍຕັ້ງແຕ່ເວລາທີ່ສັນຍາ HAP ລະຫວ່າງ PHA ແລະເຈົ້າຂອງເຮືອນ ມີຜົນບັງຄັບໃຊ້ແລ້ວເທົ່ານັ້ນ.

ຄ. ໃນລະຍະເວລາເລີ້ມຕົ້ນ ຫລືລະຍະເວລາທີ່ຕໍ່ອາຍຸຂອງບັດ voucher ອອກໄປນັ້ນ PHA ມີສິດທີ່ຈະຂໍໃຫ້ຄອບຄົວລາຍງານກ່ຽວກັບຄວາມຄືບໜ້າເຣື້ອງເຊົ່າເຮືອນເປັນລະຍະໆໄປ ຕາມແຕ່ PHA ຈະກຳນົດ.

## 3. PHA ຮັບຫລືປະຕິເສດເຮືອນ ຫລືສັນຍາເຊົ່າ

ກ. ເມື່ອຄອບຄົວຊອກໄດ້ເຮືອນທີ່ເໝາະສົມ ແລະເຈົ້າຂອງເຮືອນເຕັມໃຈທີ່ຈະເຂົ້າຮ່ວມໂຄງການ ຄອບຄົວຕ້ອງຍື່ນຄຳຮ້ອງ ຂໍໃຫ້ PHA ຮັບຮອງສັນຍາເຊົ່າ (ໃສ່ໃບຟອມຂອງ PHA) ໂດຍແມ່ນເຈົ້າຂອງເຮືອນແລະຄອບຄົວເປັນຜູ້ເຊັນ

ພ້ອມກັບສຳເນົາສັນຍາເຊົ່ານຶ່ງສບັບ ໂດຍມີເງື່ອນໄຂເຕີມທ້າຍສັນຍາຕາມຂໍ້ບັງຄັບຂອງ HUD ຄັດແນບມານຳ. **ໝາຍເຫດ: ເອກສານທັງສອງຢ່າງ ຕ້ອງໃຫ້ສົ່ງເຖິງ PHA ກ່ອນວັນກຳນົດໝົດອາຍຸທີ່ບົ່ງໄວ້ໃນຂໍ້ 3 ຫລື 4 ຢູ່ເທິງໜ້ານຶ່ງຂອງບັດ voucher ນີ້.**

ຂ. ຄອບຄົວຕ້ອງຍື່ນເອກສານເຫລົ່ານີ້ ໃຫ້ຖືກຕ້ອງຕາມວິທີການຂອງ PHA. ນະໂຍບາຍຂອງ PHA ອາດຫ້າມ ບໍ່ໃຫ້ຄອບຄົວຍື່ນຄຳຮ້ອງເກີນນຶ່ງສບັບໃນແຕ່ລະເທື່ອ ເພື່ອຂໍໃຫ້ຮັບຮອງສັນຍາເຊົ່ານັ້ນ.

ຄ. ໃນສັນຍາ ຕ້ອງມີຂໍ້ຄວາມເຕີມທ້າຍທຸກໆຂໍ້ທີ່ HUD ບົ່ງການມາແລະ PHA ເປັນຜູ້ຫາໃຫ້ນັ້ນ. ໝາຍຄວາມວ່າຕ້ອງຄັດແນບເອກສານເງື່ອນໄຂເຕີມທ້າຍຂອງ HUD ໄປກັບສັນຍາເຊົ່າຂອງເຈົ້າຂອງເຮືອນ. ໃນກໍຣະນີທີ່ມີການຂັດແຍ້ງລະວ່າງເງື່ອນໄຂເຕີ່ມທ້າຍສັນຍາເຊົ່າຂອງ HUD ແລະເງື່ອນໄຂອັນໃດອັນນຶ່ງໃນສັນຍາເຊົ່າຂອງເຈົ້າຂອງເຮືອນ ໃຫ້ປະຕິບັດຕາມເງື່ອນໄຂເຕີມທ້າຍຂອງ HUD.

ງ. ຫລັງຈາກທີ່ໄດ້ຮັບຄຳຮ້ອງຂໍໃຫ້ຮັບຮອງສັນຍາເຊົ່າພ້ອມກັບສຳເນົາຂອງສັນຍາດັ່ງກ່າວ PHA ຈະໄປສຳຣວດເບິ່ງເຮືອນ. PHA ຈະບໍ່ໃຫ້ການຮັບຮອງແກ່ຄອບຄົວໃຫ້ເຊົ່າເຮືອນຫ້ອງດັ່ງກ່າວ ຫລືປະຕິບັດຕາມສັນຍາ HAP ຈົນກວ່າ PHA ຈະເຫັນວ່າມີການປະຕິບັດຕາມເງື່ອນໄຂທຸກຢ່າງຂອງໂຄງການ ດັ່ງຕໍ່ໄປນີ້: ເຮືອນຖືກຕ້ອງຕາມເງື່ອນໄຂຂອງໂຄງການ; PHA ໄດ້ສຳຣວດເບິ່ງເຮືອນແລ້ວ ແລະເຫັນວ່າໄດ້ມາຕຖານຄຸນພາບຂອງເຄຫະສຖານ (HQS); ຄ່າເຊົ່າສົມມາ ສົມຄວນ; ແລະທັງເຈົ້າຂອງແລະຜູ້ເຊົ່າເຮືອນໄດ້ລົງນາມໃສ່ສັນຍາເຊົ່າ ຮ່ວມທັງເງື່ອນໄຂເຕີມທ້າຍສັນຍາເຊົ່າເຮືອນຂອງ HUD.

ຈ. ຖ້າ PHA ເຫັນດີໃຫ້ເຊົ່າເຮືອນຫ້ອງດັ່ງກ່າວ PHA ກໍຈະແຈ້ງໃຫ້ຄອບຄົວແລະເຈົ້າຂອງເຮືອນຊາບ ແລະຈະມອບສັນຍາເຊົ່າ HAP ສອງສບັບໃຫ້ເຈົ້າຂອງເຮືອນ.

1. ເຈົ້າຂອງເຮືອນແລະຄອບຄົວຕ້ອງລົງນາມໃສ່ສັນຍາເຊົ່າ.
2. ເຈົ້າຂອງເຮືອນຕ້ອງເຊັນສັນຍາເຊົ່າ (HAP) ທັງສອງສບັບແລະຕ້ອງມອບສັນຍາເຊົ່າທີ່ເຊັນແລ້ວນຶ່ງສບັບແລະສັນຍາ HAP ທີ່ເຊັນແລ້ວທັງສອງສບັບໃຫ້ແກ່ PHA.
3. PHA ຈະເຊັນສັນຍາ HAP ແລະສົ່ງສັນຍາທີ່ເຊັນແລ້ວນຶ່ງສບັບຄືນໃຫ້ແກ່ເຈົ້າຂອງເຮືອນ.

ສ. ຖ້າ PHA ຫາກເຫັນວ່າບໍ່ສາມາດຮັບພິຈາຣະນາເຮືອນຫລືສັນຍາເຊົ່າໄດ້ ດ້ວຍເຫດຜົນປະການໃດກໍຕາມ PHA ຕ້ອງແຈ້ງໃຫ້ເຈົ້າຂອງເຮືອນແລະຄອບຄົວຊາບ ວ່າ:

1. ເປັນຫຍັງຈຶ່ງບໍ່ສາມາດຮັບເອົາເຮືອນຫລືສັນຍາທີ່ສເນີມາ ພ້ອມທັງໃຫ້ເຫດຜົນຢ່າງລະອຽດ, ແລະ
2. ຖ້າເຫດຜົນທີ່ເຮັດໃຫ້ບໍ່ສາມາດຮັບເອົາ ໄດ້ຖືກແກ້ໄຂຈົນເປັນທີ່ພໍ່ໃຈແກ່ PHA ຕາມຫລືກ່ອນເວລາທີ່ PHA ກຳນົດໄວ້ PHA ກໍຈະຮັບເອົາເຮືອນແລະສັນຍາທີ່ສເນີມາ.

4. **ພັນທະຂອງຄອບຄົວ**

ກ. ເມື່ອເຮືອນທີ່ຄອບຄົວເລືອກ ໄດ້ຮັບການເຫັນພ້ອມ ແລະມີການເຊັນສັນຍາ HAP ໄປແລ້ວ ຄອບຄົວຕ້ອງປະຕິບັດຕາມກົດຣະບຽບທີ່ບົ່ງໄວ້ທາງລຸ່ມນີ້ ເພື່ອຈະໄດ້ມີສິດຮ່ວມໃນໂຄງການບັດອະນຸຍາກໃຫ້ເລືອກບ່ອນຢູ່ອາສັຍຕໍ່ໄປ.

ຂ. ຄອບຄົວຈະຕ້ອງ:

1. ໃຫ້ຂໍ້ມູນທຸກຢ່າງທີ່ PHA ຫລື HUD ເຫັນວ່າຈຳເປັນ ອັນໂຮມທັງຫລັກຖານສແດງເຖິງສັນຊາດ ຫລືໃບອະນຸຍາດໃຫ້ຢູ່ສຫະຣັດໄດ້ຢ່າງຖືກຕ້ອງຕາມກົດໝາຍ, ແລະຂໍ້ມູນເພື່ອໃຊ້ໃນການສຳຣວດຄືນເບິ່ງຣາຍໄດ້ຂອງຄອບຄົວ ແລະຈຳນວນສມາຊິກໃນຄອບຄົວ.
2. ແຈ້ງແລະຢັ້ງຢືນເບີປະກັນສັງຄົມ (ເບີ social security) ເຊັນແລະມອບໃບອະນຸຍາດໃຫ້ຂໍ້ມູນ.
3. ໃຫ້ຂໍ້ມູນຕາມການຮ້ອງຂໍຂອງ PHA ເພື່ອຢືນຢັນວ່າຄອບຄົວອາສັຍຢູ່ໃນເຮືອນຫລັງນັ້ນແທ້ ຫລືຂໍ້ມູນກ່ຽວກັບເຫດຜົນທີ່ຄອບຄົວບໍ່ຢູ່ໃນເຮືອນຫລັງນັ້ນ.
4. ຂຽນໜັງສືແຈ້ງໃຫ້ PHA ຊາບໂດຍທັນທີ ເວລາໃດທີ່ຄອບຄົວບໍ່ຢູ່ໃນເຮືອນເປັນເວລາດົນນານ ເພື່ອໃຫ້ສອດຄ້ອງກັບນະໂຍບາຍຂອງ PHA.
5. ອະນຸຍາດໃຫ້ PHA ເຂົ້າໄປກວດເບິ່ງເຮືອນໄດ້ ຕາມເວລາທີ່ເໝາະສົມຫລັງຈາກທີ່ PHA ໄດ້ແຈ້ງເຈຕນາຣົມໃຫ້ຊາບລ່ວງໜ້າ ດົນພໍສົມຄວນ.
6. ແຈ້ງທາງຈົດໝາຍໃຫ້ PHA ແລະເຈົ້າຂອງເຮືອນຮູ້ລ່ວງໜ້າ ກ່ອນຈະຍ້າຍໜີອອກຈາກເຮືອນ ຫລືກ່ອນຈະຍົກເລີກສັນຍາເຊົ່າ.
7. ຕ້ອງໃຊ້ເຮືອນທີ່ໄດ້ຮັບການຊ່ວຍເຫລືອຄ່າເຊົ່ານັ້ນ ເປັນບ້ານຂອງຄອບຄົວ. ເຮືອນທີ່ວ່ານີ້ ຕ້ອງເປັນບ່ອນຢູ່ອາສັຍແຫ່ງດຽວຂອງຄອບຄົວ.
8. ຂຽນຈົດໝາຍແຈ້ງໃຫ້ PHA ຊາບທັນທີທີ່ມີການເກີດ ການຮັບລູກບຸນທັມ ຫລືສານຕັດສິນໃຫ້ໄດ້ລູກມາຢູ່ໃນຄວາມດູແລ.
9. ຂໍໃຫ້ PHA ຂຽນຈົດໝາຍອະນຸຍາດໃຫ້ເພີ່ມສມາຊິກຜູ້ໃດຜູ້ນຶ່ງເຂົ້າໃນຈຳນວນຜູ້ທີ່ອາສັຍຢູ່ໃນເຮືອນ.
10. ຈົດໝາຍແຈ້ງໃຫ້ PHA ຊາບທັນທີທີ່ມີສມາຊິກໃນຄອບຄົວໜີອອກຈາກເຮືອນ.
11. ຖ້າຄອບຄົວຖືກເຈົ້າຂອງເຮືອນໄລ່ໜີ ກໍໃຫ້ສົ່ງສຳເນົາໜັງສືໄລ່ນັ້ນໃຫ້ PHA.
12. ເສັຍຄ່ານ້ຳ ຄ່າໄຟຟ້າ ຄ່າໂທຣະສັບ ແລະໃຫ້ຊອກຫາມາເອງແລະຮັກສາເຄື່ອງໃຊ້ໃນເຮືອນ ທີ່ເຈົ້າຂອງເຮືອນບໍ່ມີໜ້າທີ່ຊອກຫາໃຫ້ຕາມສັນຍາເຊົ່າ.

ຄ. ຂໍ້ມູນທຸກຢ່າງທີ່ຄອບຄົວມອບໃຫ້ ຕ້ອງເປັນຄວາມຈິງແລະຄົບຖ້ວນ.

ງ. ຄອບຄົວ ອັນໝາຍເຖິງສມາຊິກໃນຄອບຄົວແຕ່ລະຄົນ ຕ້ອງບໍ່:

1. ເປັນເຈົ້າຂອງຫລືມີຜົນປະໂຫຍດໃນເຮືອນ (ນອກຈາກວ່າເປັນເຮືອນສຫະກອນ, ຫລືເປັນເຈົ້າຂອງເຮືອນສຳເຣັດຮູບ ທີ່ເຊົ່າບ່ອນຕັ້ງເຮືອນເທົ່ານັ້ນ).
2. ລະເມີດສັນຍາເຊົ່າເລື້ອຍໆຢ່າງຮ້າຍແຮງ.
3. ຫລອກລວງ, ໃຫ້ສິນບົນ ຫລືກະທຳຄວາມຜິດຢ່າງໃດຢ່າງນຶ່ງກ່ຽວກັບໂຄງການນີ້.
4. ກະທຳຄວາມຜິດກ່ຽວກັບບັນຫາຢາເສບຕິດ ຫລືອາຊຍາກັມຂັ້ນຮ້າຍແຮງຫລືຄວາມຜິດອື່ນໆຊຶ່ງຈະເປັນພັຍຂົ່ມຂູ່ຕໍ່ສຸຂພາບ ຄວາມປອດພັຍຫລືຄວາມສງົບສຸກຂອງຜູ້ອື່ນທີ່ຢູ່ໃກ້ຄຽງ.
5. ໃຫ້ຜູ້ອື່ນມາເຊົ່າເຮືອນຕໍ່ ຫລືປ່ຽນຊື່ໃນສັນຍາເຊົ່າຫລືສັນຍາຊື້.
6. ຮັບເອົາເງິນຊ່ວຍເຫລືອຈາກໂຄງການອອກບັດໃຫ້ເລືອກທີ່ຢູ່ອາສັຍ ໃນຂນະທີ່ໄດ້ຮັບການຊ່ວຍເຫລືອຈາກແຫລ່ງອື່ນໃນດ້ານການເຄຫະສຖານສຳລັບເຮືອນຫ້ອງດຽວກັນ ຫລືຫ້ອງອື່ນ ຈະເປັນໂຄງການຊ່ວຍເຫລືອດ້ານເຄຫະສຖານຂັ້ນທ້ອງຖິ່ນ ຂັ້ນຣັຖ ຫລືຂັ້ນຣັຖບານກາງກໍຕາມ.
7. ສ້າງຄວາມເສັຍຫາຍດ້ານວັດຖຸໃຫ້ເຮືອນຫລືອາຄານ (ນອກຈາກສພາບເກົ່າລົງທີ່ມາຈາກການໃຊ້ສອຍທັມດາ) ຫລືອະນຸຍາດໃຫ້ແຂກທີ່ມາຢ້ຽມຢາມສ້າງຄວາມເສັຍຫາຍ ໃຫ້ແກ່ເຮືອນຫລືບ່ອນຢູ່.
8. ຮັບການຊ່ວຍເຫລືອຈາກໂຄງການອອກບັດໃຫ້ເລືອກບ່ອນຢູ່ອາສັຍໃນເວລາທີ່ຢູ່ເຮືອນອັນເປັນກັມສິດຂອງພໍ່ແມ່ ລູກ ພໍ່ເຖົ້າແມ່ເຖົ້າ ຫລານເອື້ອຍນ້ອງ ຫລືຍາດພີ່ນ້ອງຜູ້ອື່ນ ນອກຈາກວ່າ PHA ຈະລົງຄວາມເຫັນ (ແລະໄດ້ແຈ້ງໃຫ້ເຈົ້າຂອງເຮືອນແລະຄອບຄົວຊາບກ່ຽວກັບການຕົກລົງໃຈນີ້) ວ່າການທີ່ເຫັນພ້ອມໃຫ້ເຊົ່າເຮືອນຫລັງນີ້, ເຖິງວ່າຈະເປັນເຮືອນພີ່ນ້ອງກໍ່ດີ, ຈະເປັນບ່ອນຢູ່ເໝາະສົມສຳລັບສມາຊິກໃນຄອບຄົວຜູ້ທີ່ເສັຍອົງຄະ.

9. ດື່ມສຸຣາຫລາຍເກີນຄວນ ແບບທີ່ເປັນພັຍອັນຕຣາຍຂົ່ມຂູ່ຕໍ່ສຸຂພາບ ຄວາມປອດພັຍ ແລະຄວາມສງົບສຸກຂອງຜູ້ອື່ນທີ່ຢູ່ໃກ້ຄຽງ.

## 5. ການຈຳແນກທີ່ຜິດກົດໝາຍ

ຖ້າຄອບຄົວຮູ້ສຶກວ່າມີເຫດຜົນພຽງພໍ ທີ່ພາໃຫ້ເຂົ້າໃຈວ່າໃນເວລາຊອກເຮືອນຢູ່ນັ້ນ ພວກຕົນຖືກຈຳແນກຍ້ອນອາຍຸ ເຊື້ອຊາຕ ຜິວໜັງ ສາສນາ ເພດ ການເສັຍອົງຄະ ຊາດກຳເນີດ ຫລືຖານະຄອບຄົວ, ຄອບຄົວກໍມີສິດທີ່ຈະຍື່ນຟ້ອງຖານຖືກຈຳແນກ ຕໍ່ເຈົ້າໜ້າທີ່ປະຈຳຫ້ອງທີ່ຂອງ HUD ໂດຍຕົນເອງ ຫລືທາງໄປສະນີ ຫລືໂທຣະສັບໄດ້.

PHA ຈະແນະນຳຄອບຄົວກ່ຽວກັບວິທີຂຽນແລະສົ່ງຟອມຟ້ອງຮ້ອງ.

## 6. ເວລາໝົດອາຍຸແລະເວລາຕໍ່ອາຍຸຂອງບັດ voucher

ບັດ voucher ຈະໝົດອາຍຸໃນວັນທີທີ່ຂຽນໄວ້ຢູ່ຂໍ້ 3 ເທິງໜ້ານຶ່ງຂອງບັດ voucher ນອກຈາກວ່າຄອບຄົວຂຽນຈົດໝາຍໄປຂໍຕໍ່ ແລະ PHA ກໍຂຽນຕອບອະນຸມັດກັບມາ ຊຶ່ງໃນກໍຣະນີນີ້ ບັດ voucher ກໍຈະໝົດອາຍຸຕາມວັນທີທີ່ຂຽນໄວ້ໃນຂໍ້ 4.

PHA ຈະເປັນຜູ້ຕັດສິນວ່າຄວນຈະຕໍ່ອາຍຸບັດ voucher ໃຫ້ຄອບຄົວເທື່ອນຶ່ງ ຫລືຫລາຍເທື່ອ.

*ເອກສານສບັບນີ້ ແມ່ນແປມາຈາກເອກສານດ້ານກົດໝາຍສບັບຕ່າງໆ ທີ່ກະຊວງເຄຫະສຖານແລະການພັທນາຕົວເມືອງຂອງສຫະຣັຖໄດ້ນຳອອກເຜີຍແຜ່. ທາງກະຊວງເຄຫະ ສຖານແລະການພັທນາຕົວເມືອງ ໄດ້ຈັດເອກສານແປເປັນພາສາລາວສບັບນີ້ ໄວ້ສນອງທ່ານເພື່ອອຳນວຍຄວາມສດວກແລະຊ່ວຍໃຫ້ທ່ານສາມາດເຂົ້າໃຈໃນສິດທິແລະພັນທະໜ້າທີ່ຂອງທ່ານ. ສຳເນົາພາສາອັງກິດຂອງເອກສານສບັບນີ້ເທົ່ານັ້ນ ທີ່ເປັນເອກສານທາງການ ແລະມີອຳນາດຜູກມັດທາງດ້ານກົດໝາຍ. ເອກສານທີ່ແປອອກມາເປັນພາສາລາວສບັບນີ້ ບໍ່ແມ່ນເອກສານທາງການແຕ່ຢ່າງໃດ.*